ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — ເລກທີ 532 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2021

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ທົ່ວປະເທດ ທີ່ນັບຖື.

ເລື່ອງ: ທິດຊີ້ນຳກ່ຽວກັບການປະຕິບັດນະໂຍບາຍ ແລະ ມາດຕະການແກ້ໄຂຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ ຈາກການລະບາດ ຂອງພະຍາດ COVID-19.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017;
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມແຈ້ງການ ສະບັບເລກທີ 462/ຫສນຍ, ລົງວັນທີ 05 ພຶດສະພາ 2021 ຂອງຫ້ອງວ່າ ການສຳນັກງານນາຍົກລັດຖະມົນຕີ;
- ອີງຕາມເອກະສານລາຍງານ ສະບັບເລກທີ 0703/ກຜທ, ລົງວັນທີ 04 ພຶດສະພາ 2021 ຂອງກະຊວງແຜນການ ແລະ ການລົງທຶນ;
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 12 ພຶດສະພາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: ເພື່ອເປັນການຜ່ອນຄາຍມາດຕະການສ່ວນໃດໜຶ່ງ ແລະ ແກ້ໄຂຜົນກະທົບຈາກສະພາບການລະບາດຂອງພະຍາດ COVID-19 ທີ່ເກີດຂຶ້ນຕໍ່ພາກການຜະລິດ-ທຸລະກິດ, ປະຊາຊົນ,



Scanned with CamScanner

ພະນັກງານ, ທະຫານ-ຕໍາຫຼວດ ແລະ ທຸກພາກສ່ວນໃນສັງຄົມ. ສະນັ້ນ ລັດຖະບານ ຈຶ່ງໄດ້ຕົກລົງປະຕິບັດນະໂຍບາຍ ແລະ ມາດຕະການຈໍານວນໜຶ່ງ ດັ່ງນີ້:

1. <u>ດ້ານນະໂຍບາຍ</u>:

1) ເຫັນດີໃຫ້ປະຕິບັດນະໂຍບາຍທາງດ້ານການເງິນ ດັ່ງນີ້:

- ຍົກເວັ້ນການເກັບອາກອນລາຍໄດ້ເງິນເດືອນຂອງແຮງງານ ທັງພາກລັດ ແລະ ເອກະຊົນ ທີ່ມີລາຍໄດ້ 5 ລ້ານກີບ ລົງມາ ໃນໄລຍະ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2021);
- ຍົກເວັ້ນການເກັບອາກອນລາຍໄດ້ ຂອງຈຸນລະວິສາຫາກິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ເປັນໄລຍະ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2021);
- ເລື່ອນໄລຍະການຈັດຕັ້ງປະຕິບັດການຍື່ນເອກະສານລາຍງານການເງິນປະຈໍາປີການບັນຊີ 2020 ຈົນຮອດວັນທີ 30 ມິຖຸນາ 2021 ຕາມແຈ້ງການ ສະບັບເລກທີ 2081/ກງ, ລົງວັນທີ 30 ເມສາ 2021;
- ເລື່ອນໄລຍະເວລາການຊໍາລະຄ່າທໍານຽມທາງ ໄປຈົນຮອດວັນທີ 30 ມິຖຸນາ ປີ 2021;
- ຍົກເວັ້ນພາສີ-ອາກອນ ສໍາລັບສິນຄ້ານໍາເຂົ້າເພື່ອຮັບໃຊ້ວຽກງານປ້ອງກັນ ແລະ ປິ່ນປົວພະຍາດໂຄວິດ-19 ເປັນຕົ້ນແມ່ນ ຢາວັກຊີນ, ຜ້າປິດປາກ-ດັງ, ນໍ້າຢາລ້າງມື, ຖົງມື, ເຄື່ອງວັດອຸນນະພູມ ແລະ ອຸປະກອນການແພດອື່ນໆທີ່ຈໍາເປັນ. ໃນພາກປະຕິບັດຕົວຈິງ ແມ່ນມອບໃຫ້ກອງເລຂາຄະນະສະເພາະກິດ ໂຄວິດ-19 ຂັ້ນສູນກາງ ແລະ ທ້ອງຖິ່ນ ຢັ້ງຢືນລາຍການສິນຄ້າຕົວຈິງ ແລ້ວນໍາສົ່ງຂະແໜງການເງິນ ຄຸ້ມຄອງການນໍາເຂົ້າຜ່ານດ່ານຊາຍແດນສາກົນ, ຂະແໜງອຸດສາຫະກໍາ ແລະ ການຄ້າ ອະນຸຍາດຕາມຂັ້ນຕອນ, ຖ້ານໍາເຂົ້າລັກສະນະທາງການຄ້າ ຕ້ອງຄຸ້ມຄອງລາຄາຈໍາໜ່າຍຕາມລະບຽບການ ເພື່ອໃຫ້ປະຊາຊົນໄດ້ຊົມໃຊ້ເຄື່ອງປ້ອງກັນໃນລາຄາທີ່ເໝາະສົມ;
- ມອບໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບບັນດາຂະແໜງການກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍຫຼຸດອັດຕາອາກອນມູນຄ່າເພີ່ມ (VAT) ຕາມຄວາມເໝາະສົມ ເພື່ອຊ່ວຍກະຕຸ້ນພາກເສດຖະກິດ ແຕ່ຄຽງຄູ່ກັນນັ້ນ ກໍໃຫ້ຄໍານຶງເຖິງຜົນກະທົບຕໍ່ການເກັບລາຍຮັບເຂົ້າງົບປະມານປະຈໍາປີ 2021 ແລະ ຊຸມປີຕໍ່ໜ້າ ໂດຍສະເພາະ ຜູ້ປະກອບການທຸລະກິດບໍລິການທ່ອງທ່ຽວ ແລະ ການບໍລິການປິ່ນອ້ອມ ໃນອັດຕາ ແລະ ໄລຍະເວລາ ທີ່ເໝາະສົມ.

2) ເຫັນດີໃຫ້ສືບຕໍ່ປະຕິບັດນະໂຍບາຍດ້ານສິນເຊື່ອ ດັ່ງນີ້:

- ສືບຕໍ່ຊຸກຍູ້ການປະຕິບັດນະໂຍບາຍຜ່ອນຜັນດ້ານສິນເຊື່ອໃຫ້ແກ່ລູກຄ້າເງິນກູ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ເປັນຕົ້ນ ການເລື່ອນເວລາຊໍາລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍ, ການປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທໍານຽມ , ການສະໜອງເງິນກູ້ບ້ວງໃໝ່ ແລະ ການປັບປຸງໂຄງສ້າງໜີ້ເງິນກູ້ຄືນ ຕາມຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່



Scanned with CamScanner

(COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020 ແລະ ຂໍ້ຕົກລົງເພີ່ມເຕີມວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອດັ່ງກ່າວ ສະບັບເລກທີ 256/ທຫລ, ລົງວັນທີ 13 ພຶດສະພາ 2021;

- ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍເພື່ອສ້າງຄວາມເຂັ້ມແຂງດ້ານແຫຼ່ງທຶນ ໃຫ້ແກ່ການສະໜອງສິນເຊື່ອ ເພື່ອຊຸກຍູ້ການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ ເພື່ອແກ້ໄຂຜົນກະທົບຈາກພະຍາດ COVID-19 ທັງສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະ ໜາດນ້ອຍ ແລະ ກາງ (SMEs) ເປັນຕົ້ນ ແຫຼ່ງທຶນຈາກໂຄງການສິນເຊື່ອສະເພາະກິດຂອງທະນາຄານແຫ່ງ ສປປ ລາວ ຕາມຂໍ້ຕົກລົງວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດລະບາດ COVID-19 ສະບັບເລກທີ 318/ທຫລ, ລົງວັນທີ 19 ພຶດສະພາ 2020 ແລະ ທຶນເພື່ອສົ່ງເສີມກອງທຶນ SMEs ຂອງລັດຖະບານ, ການເບີກຖອນເງິນກູ້ຈາກທະນາຄານພັດທະນາແຫ່ງຊາດຈີນ (CDB).

3) ເຫັນດີໃຫ້ສືບຕໍ່ປະຕິບັດນະໂຍບາຍອຸດໜູນ ແລະ ຊ່ວຍເຫຼືອແຮງງານຕາມແຈ້ງການ ສະບັບເລກທີ 1532/ຮສສ ລົງວັນທີ 05 ພຶດສະພາ 2021, ສະບັບເລກທີ 1376/ຮສສ, ລົງວັນທີ 29 ເມສາ 2021 ແລະ ສະບັບເລກທີ 1531/ຮສສ, ລົງວັນທີ 05 ພຶດສະພາ 2021ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄື:

- ປະຕິບັດນະໂຍບາຍອຸດໜູນແຮງງານໃນລະບົບປະກັນສັງຄົມ ທີ່ໄດ້ຮັບຜົນກະທົບຈາກການລະ ບາດພະຍາດ COVID-19 ອີງໃສ່ສະພາບການຈັດຕັ້ງການລະບາດພະຍາດ COVID-19, ພ້ອມທັງໂຈະ ແລະ ເລື່ອນມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ສຳລັບຫົວໜ່ວຍແຮງງານທີ່ໄດ້ຢຸດກິດຈະການຊົ່ວຄາວ ແລະ ບໍ່ໄດ້ເບີກຈ່າຍເງິນເດືອນໃຫ້ແກ່ຜູ້ອອກແຮງງານ ແລະ ຍັງໃຊ້ສິດອຸດໜູນການປິ່ນປົວ ສຸຂະພາບ ແລະ ອຸດໜູນໄລຍະສັ້ນ;
- ເຫັນດີໃຫ້ເກັບກຳຂໍ້ມູນ ແລະ ປະຕິບັດການຊ່ວຍເຫຼືອແຮງງານທີ່ບໍ່ໄດ້ຢູ່ໃນລະບົບປະກັນສັງຄົມ ທີ່ໄດ້ຮັບຜົນກະທົບໃນຮູບແບບຕ່າງໆຕາມເງື່ອນໄຂຕົວຈິງ ໃນແຕ່ລະກໍລະນີ ແລະ ປະຕິບັດນະໂຍບາຍຕ່າງໆ ກ່ຽວກັບການຈ່າຍເງິນສົມທົບ ແລະ ເງິນອຸດໜູນສຳລັບຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ສະເພາະໃນໄລຍະພັກວຽກ ກໍຄືການແຜ່ລະບາດຂອງພະຍາດ COVID-19 ໃຫ້ມີຄວາມເໝາະສົມ;

4) ເຫັນດີໃຫ້ສືບຕໍ່ປະຕິບັດນະໂຍບາຍຊ່ວຍເຫຼືອພາກສັງຄົມ ແລະ ປະຊາຊົນ ໂດຍການຫຼຸດຄ່າບໍລິການນ້ຳປະປາ, ໄຟຟ້າ, ອິນເຕີເນັດ, ຂໍ້ເຫຍື່ອ ແລະ ອື່ນໆ ໃນລະດັບທີ່ເໝາະສົມ ແລະ ເລື່ອນເວລາການຊຳລະຄ່ານ້ຳປະປາໃນເດືອນ ພຶດສະພາ, ມິຖຸນາ ແລະ ກໍລະກົດ ປີ 2021 ຫຼື ຕາມຄວາມເປັນຈິງໃນກໍລະນີມີການສືບຕໍ່ແຜ່ລະບາດຕື່ມ ຕາມເອກະສານ ຂອງກະຊວງພະລັງ ງານ ແລະ ບໍ່ແຮ່ ສະບັບເລກທີ 1001/ຫກ, ລົງວັນທີ 28 ເມສາ 2021; ແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 08610/ຍທຂ.ທກ, ລົງວັນທີ 29 ເມສາ 2021 ແລະ ແຈ້ງການຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 029/ຕສ, ລົງວັນທີ 07 ພຶດສະພາ 2021.

**2. <u>ດ້ານມາດຕະການ</u>:**



Scanned with CamScanner

1) ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານງານ ກັບຂະແໜງການທີ່ກ່ຽວຂ້ອງ ເພື່ອປະເມີນຄືນຕົວເລກເສດຖະກິດມະຫາພາກຕ່າງໆ ໃນປີ 2021 ທີ່ອາດຈະໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ໃນຮອບໃໝ່ນີ້ຢ່າງລະອຽດ ເປັນ ຕົ້ນ: ຕົວເລກການຂະຫຍາຍຕົວເສດຖະກິດ (GDP), ຄວາມດຸ່ນດ່ຽງທາງດ້ານມະຫາພາກ, ຄາດໝາຍລາຍຮັບ-ລາຍຈ່າຍງົບປະມານ, ອັດຕາເງິນເຟີ້ ແລະ ອື່ນໆ ເພື່ອດັດປັບຕົວເລກເສດຖະ ກິດມະຫາພາກ ເພື່ອສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ ໃນກໍລະນີມີຄວາມຈໍາເປັນ. ພ້ອມນັ້ນ, ກໍເລັ່ງຊຸກຍູ້ ແລະ ກວດກາໂຄງການລົງທຶນຕ່າງປະເທດຂະໜາດໃຫຍ່ ແລະ ໂຄງການລົງທຶນ ຢູ່ຕາມເຂດເສດຖະກິດພິເສດ ໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນການ ທີ່ໄດ້ກໍານົດໄວ້.

2) ມອບໃຫ້ກະຊວງການເງິນ ເລັ່ງເກັບລາຍຮັບງົບປະມານ ທີ່ເປັນທ່າແຮງ ແລະ ບໍ່ຖືກຜົນກະທົບໂດຍກົງຈາກການລະບາດຂອງພະຍາດ COVID-19, ໃນນັ້ນ ໃຫ້ເລັ່ງຫັນການເກັບລາຍຮັບເປັນທັນສະໄໝ ໃຫ້ຫຼາຍຂຶ້ນ, ປັບປຸງນິຕິກໍາລຸ່ມກົດໝາຍ ຂອງຂະແໜງການທີ່ສໍາຄັນຈໍານວນໜຶ່ງ ທີ່ຕິດພັນກັບການເກັບລາຍຮັບ ເພື່ອສ້າງຖານລາຍຮັບ ໃນສະເພາະໜ້າ, ພ້ອມກັນນັ້ນ ກໍໃຫ້ເພີ່ມທະວີ ເຜີຍແຜ່-ໂຄສະນາ ໃຫ້ສັງຄົມເຂົ້າໃຈ ຕໍ່ຄວາມສໍາຄັນຂອງການມອບພັນທະເຂົ້າງົບປະມານໃຫ້ລັດ.

- ອອກມາດຕະການໂຈະ ແລະ ຫລຸດລາຍຈ່າຍງົບປະມານ ທີ່ບໍ່ຈໍາເປັນເພື່ອຫລຸດຜ່ອນການຂາດດຸນງົບປະມານ ໂດຍຄົ້ນຄວ້າຫລຸດລາຍຈ່າຍບໍລິ ຫານ ແລະ ດັດສົມ-ສົ່ງເສີມ ຂອງຂະແໜງການ ສູນກາງ 15% ຂອງແຜນປີ (ຍົກເວັ້ນຂະແໜງສາທາລະນະສຸກ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ງົບປະມານຂອງສູນເລືອກ ແລະ ລາຍຈ່າຍຈໍາເປັນຂອງຂະແໜງການຈໍານວນໜຶ່ງ) ແລະ ຫຼຸດລາຍຈ່າຍດັດສົມ-ສົ່ງເສີມ ທ້ອງຖິ່ນ 10% ຂອງແຜນປີ ແລະ ຫຼຸດບາງຮ່ວງລາຍຈ່າຍ ເຊັ່ນ: ລາຍຈ່າຍຊື້ໃໝ່, ລາຍຈ່າຍບໍລິຫານທີ່ບໍ່ຈໍາເປັນ, ລາຍຈ່າຍເງິນລົງທຶນປຸກສ້າງ ແລະ ອື່ນໆ ເພື່ອໃຫ້ມີງົບປະມານເພື່ອໃຊ້ຈ່າຍໃນວຽກງານທີ່ຈໍາເປັນກວ່າ ເປັນຕົ້ນ ວຽກງານປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂການລະບາດພະຍາດ COVID-19; ດໍາເນີນການເບີກຈ່າຍງົບປະມານ ໃຫ້ແກ່ໂຄງການລົງທຶນ ທີ່ເປັນບຸລິມະສິດ ເປັນຕົ້ນໂຄງການທີ່ຖືກເລື່ອນຈ່າຍ ຈາກປີ 2020 ແລະ ໂຄງການທີ່ຈໍາເປັນໃນແຜນປີ 2021. ພ້ອມນັ້ນ, ກໍໃຫ້ສົມທົບກັບກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າເລື່ອນຈ່າຍໂຄງການຈໍານວນໜຶ່ງທີ່ມີເງື່ອນໄຂ ໄປຈ່າຍໃນປີ 2022.

3) ມອບໃຫ້ທະນາຄານແຫ່ງ ສປປ ລາວ ສືບຕໍ່ດໍາເນີນນະໂຍບາຍເງິນຕາ ໃຫ້ສອດຄ່ອງກັບສະພາບເສດຖະກິດຕົວຈິງແຕ່ລະໄລຍະ ແນໃສ່ຮັບປະກັນໄດ້ສະຖຽນລະພາບເງິນຕາແຫ່ງຊາດ ພ້ອມທັງຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ; ຮັບປະກັນປະສິດ ທິພາບ, ປະສິດທິຜົນ ແລະ ຂອບເວລາໃນການຈັດຕັ້ງປະຕິບັດບັນດານະໂຍບາຍຜ່ອນຜັນດ້ານສິນເຊື່ອ ແລະ ບັນດາໜ້າວຽກເພື່ອສ້າງຄວາມເຂັ້ມແຂງດ້ານແຫຼ່ງທຶນ ໃນການສົ່ງເສີມ SMEs, ທັງສ້າງຄວາມເຂັ້ມແຂງໃຫ້ພື້ນຖານເສດຖະກິດພາຍໃນ ແລະ ສົ່ງເສີມການສົ່ງອອກ; ສືບຕໍ່ສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໄປຄຽງຄູ່ກັບການສົ່ງເສີມການເຖິງການບໍລິການດ້ານການເງິນຂອງປະຊາຊົນ ໃຫ້ນັບມື້ນັບທົ່ວເຖິງ ສົມເຫດສົມຜົນ ແລະ ປອດໄພ.

4) ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ອອກນະໂຍບາຍ, ແຈ້ງການ ແລະ ຄໍາສັ່ງຕ່າງໆ ເພື່ອຄຸ້ມຄອງ ແລະ ຕິດຕາມ-ກວດກາ ສະພາບລາຄາສິນຄ້າຢູ່ໃນຕະຫຼາດຢ່າງເປັນປົກກະຕິ.



Scanned with CamScanner

ພ້ອມນັ້ນ, ກໍໃຫ້ປະສານກັບພາກສ່ວນກ່ຽວຂ້ອງ ກວດກາບັນດາບໍລິສັດ ນຳເຂົ້າສິນຄ້າ ເພື່ອຢັ້ງຢືນປະລິມານສິນຄ້າ ໂດຍສະເພາະ ອຸປະກອນ ແລະ ຢາປົ່ວພະຍາດ ທີ່ມີໃນສາງໃຫ້ພຽງພໍກັບຄວາມຕ້ອງການພາຍໃນຕົວຈິງ ທັງປະສານກັບປະເທດເພື່ອນບ້ານ ເພື່ອຂໍການນຳເຂົ້າສິນຄ້າ ທີ່ຈຳເປັນບາງປະເພດ ທີ່ມີປະລິມານບໍ່ພຽງພໍ. ນອກຈາກນັ້ນ, ກໍໃຫ້ເປັນເຈົ້າການເຈລະ ຈາກັບປະເທດຄູ່ຄ້າ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການສົ່ງອອກສິນຄ້າ ຂອງລາວ.

5) ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ອອກມາດຕະການສົ່ງເສີມການຜະລິດກະສິກຳປູກຝັງ ແລະ ລ້ຽງສັດ ໃນຂອບເຂດທົ່ວປະເທດ ຕາມທ່າແຮງຂອງແຕ່ລະເຂດ ໂດຍເອົາໃຈໃສ່ສະໜອງແນວພັນ, ເຕັກນິກອຸປະກອນ ແລະ ວິຊາການ ໃຫ້ພຽງພໍ ເພື່ອຊຸກຍູ້ການຜະລິດພາຍໃນ ໂດຍສະເພາະ ໃນລະດູຝົນທີ່ຈະມານີ້, ພ້ອມນັ້ນ ໃຫ້ເລັ່ງແກ້ໄຂຄວາມຫຍຸ້ງຍາກຕ່າງໆ ຊ່ວຍພາກທຸລະກິດ ທີ່ລົງທຶນສົ່ງເສີມຊາວກະສິກອນຜະລິດສິນຄ້າກະສິກຳເປັນສິນຄ້າເພື່ອສົ່ງອອກໄປຕ່າງປະເທດ ໂດຍສະເພາະປະເທດໃກ້ຄຽງ.

6) ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ອອກມາດຕະການຊຸກຍູ້ ແລະ ສົ່ງເສີມບັນດາໂຄງການພະລັງງານ ແລະ ບໍ່ແຮ່ ທີ່ໄດ້ອະນຸມັດແລ້ວ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ໄວ, ພ້ອມທັງ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເລັ່ງແກ້ໄຂບັນຫາໜີ້ສິນຂອງບໍລິສັດ ໄຟຟ້າລາວ ໂດຍໄວ.

7) ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເອົາໃຈໃສ່ແກ້ໄຂດ້ວຍມາດຕະການທີ່ຖືກຕ້ອງ ຕາມລະບຽບການຕ່າງໆຕໍ່ຂໍ້ມູນຂ່າວສານ ທີ່ບິດເບືອນ ແລະ ໃສ່ຮ້າຍປ້າຍສີຕໍ່ລັດຖະບານ ຂອງກຸ່ມຄົນ ແລະ ບຸກຄົນທີ່ສ້າງຂຶ້ນໃຫ້ທັນທ່ວງທີ; ໂຄສະນາເຜີຍແຜ່ຂໍ້ມູນນະໂຍບາຍ ແລະ ມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ, ຫັນປ່ຽນສັງຄົມຈາກການຊົມໃຊ້ ໄປສູ່ສັງຄົມການຜະລິດໃຫ້ຫຼາຍຂຶ້ນ. ນອກຈາກນັ້ນ, ກະກຽມຄວາມພ້ອມດ້ານການບໍລິການການທ່ອງທ່ຽວ ແລະ ຊຸກຍູ້ໂຄງການລາວທ່ຽວລາວ ໃຫ້ຂະຫຍາຍຕົວ ໂດຍເອົາໃຈໃສ່ສ້າງລາຍການທ່ອງທ່ຽວ, ເຜີຍແຜ່ໂຄສະນາສະຖານທີ່ທ່ອງທ່ຽວ ແລະ ມີສ່ວນຫຼຸດດ້ານລາຄາ.

8) ມອບໃຫ້ກະຊວງແຮງງານ ແລະສະຫວັດດີການສັງຄົມ ເລັ່ງເກັບຂໍ້ມູນຕົວເລກແຮງງານທີ່ວ່າງງານ ແລະ ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ເພື່ອຈັດການຝຶກອົບຮົມດ້ານສີມືແຮງງານ ແລະ ຈັດສັນເຂົ້າສູ່ການຈ້າງງານໃຫ້ໄດ້ໄວ ໂດຍສະເພາະ ບັນດາໂຄງການລົງທຶນຕ່າງປະເທດ ທີ່ມີຄວາມຕ້ອງການແຮງງານຈຳນວນຫຼວງຫຼາຍ ແລະ ສົມທົບກັບຄະນະສະເພາະກິດຂັ້ນແຂວງ, ນະຄອນຫຼວງວຽງຈັນ ແກ້ໄຂຄວາມຫຍຸ້ງຍາກຂອງແຮງງານ ທີ່ພັກຢູ່ເຮືອນເຊົ່າ, ຫ້ອງແຖວ ຫຼື ອາຊີບອິດສະຫຼະໃນຊ່ວງມີການປິດເມືອງນີ້.

9) ມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ຄົ້ນຄວ້າອອກນິຕິກຳ, ມາດຕະການ ແລະ ກົນໄກແກ້ໄຂຄວາມຫຍຸ້ງຍາກໃນການນຳເຂົ້າ-ສົ່ງອອກສິນຄ້າ, ການເຄື່ອນຍ້າຍສິນຄ້າພາຍໃນ ໂດຍໃຫ້ຫຼຸດຜ່ອນຂັ້ນຕອນ ແລະ ເວລາໃນການນຳເຂົ້າ-ສົ່ງອອກສິນຄ້າ ຢູ່ບັນດາດ່ານສາກົນໃຫ້ສັ້ນລົງ; ເພີ່ມທະວີການຕິດຕາມ-ກວດກາສະພາບການເຄື່ອນຍ້າຍສິນຄ້າພາຍໃນ (ເມືອງ ຫາ ເມືອງ, ແຂວງ ຫາ ແຂວງ) ໃຫ້ມີຄວາມສະດວກ, ຖ້າມີປະກົດການທີ່ເຈົ້າໜ້າທີ່ກ່ຽວຂ້ອງ ຍັງສ້າງຄວາມຫຍຸ້ງຍາກໃຫ້ຜູ້ປະກອບການໃນການຂົນສົ່ງສິນຄ້າ ແມ່ນໃຫ້ສົມທົບພາກສ່ວນກ່ຽວຂ້ອງ ແກ້ໄຂໃຫ້ທັນການ; ພ້ອມກັນນັ້ນ ກໍເປັນໃຈກາງສົມທົບກັບກະຊວງການຕ່າງປະ ເທດ, ກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ຄົ້ນຄວ້າການອະນຸຍາດໃຫ້ມີຖ້ຽວບິນເໝົາລຳ ລວມທັງ



Scanned with CamScanner

ການບໍລິການຖ້ຽວບິນເໝົາລຳ ຂອງສາຍການບິນລາວ ໃຫ້ເພີ່ມຂຶ້ນ ເພື່ອຊ່ວຍປະຄອງຕໍ່ທຸລະກິດ, ແຕ່ຕ້ອງມີມາດຕະການປ້ອງກັນການຕິດເຊື້ອຢ່າງເຂັ້ມງວດ.

10) ມອບໃຫ້ກະຊວງການຕ່າງປະເທດ ສົມທົບກັບກະຊວງສາທາລະນະສຸກ ແລະ ຂະແໜງການກ່ຽວຂ້ອງ ສືບຕໍ່ໂຄສະນາ-ອະທິບາຍ ນະໂຍບາຍຕ່າງໆຂອງພັກ-ລັດເຮົາ ທີ່ພົວພັນເຖິງການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການລະບາດຂອງພະຍາດ COVID-19 ໃຫ້ຕ່າງປະເທດ ລວມທັງບັນດານັກລົງທຶນ, ວິຊາການຕ່າງໆ ທີ່ເປັນຄົນຕ່າງປະເທດ ທີ່ເຄື່ອນໄຫວວຽກງານຢູ່ ສປປ ລາວ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ເພື່ອໃຫ້ຮັບຮູ້ເຂົ້າໃຈ ເພື່ອໃຫ້ການຮ່ວມມື ຕາມທາງຄວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ຄຳເຈນ ວົງໂພສີ

<u>ບ່ອນນຳສົ່ງ:</u>

- ນາຍົກ-ຮອງນາຍົກລັດຖະມົນຕີ
- 04 ສະບັບ;
- ຫ້ອງວ່າການສູນກາງພັກ 01 ສະບັບ;
- ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ;
- ບັນດາອົງການຈັດຕັ້ງຂອງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ, ບ່ອນລະ 01 ສະບັບ;
- ຄະນະຫ້ອງວ່າການ ສນຍ, ທ່ານລະ 01 ສະບັບ;
- ກົມກ່ຽວຂ້ອງ ຂອງ ຫສນຍ, ບ່ອນລະ 01 ສະບັບ;
- ສຳເນົາ 01 ສະບັບ.



Scanned with CamScanner